ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ
LAO CEMENT PUBLIC COMPANY

ຖະໜົນ ໜອງບອນ ວຽງຈັນ, ສ. ປ. ປ. ລາວ ຕູ້ ປ.ນ 6821, ໂທຣ: (856-21) 412111, 451116 ແຟັກ: 263120, 451222
NONGBONE RD, VIENTIANE, LAO P.D.R P.O.BOX 6821, TEL: (856-21) 412111, 451116 FAX: 263120, 451222
E-mail: Lcc@laocement.com, www.laocement.com

ເລກທີ 122 /ບຊລ

ນະຄອນຫລວງວຽງຈັນ, ວັນທີ 02 MAY 2019

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
: ທ່ານ ຜູ້ອຳນວຍການໃຫ່ຍຕະຫລາດຫຼັກຊັບລາວ
: ທ່ານ ຜູ້ຖືຮຸ້ນຂອງບໍລິສັດ ຊີມັງລາວ ມະຫາຊົນ

ເລື່ອງ : ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018 ຄັ້ງວັນທີ 30/04/2019

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບວ່າດວ້ຍລະບຽບການລາຍງານ ແລະການເປີດເຜີຍຂໍ້ມູນສະບັບເລກທີ 007/ຄຄຊ, ລົງວັນທີ 03 ເມສາ 2014,
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດວ້ຍການເປີດເຜີຍຂໍ້ມູນເລກທີ 22/LSX. ລົງວັນທີ 07 ມັງກອນ 2011,

ບໍລິສັດ ຊີມັງລາວ ມະຫາຊົນ (ບໍລິສັດ) ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018 (ຕໍ່ໄປນີ້ຮຽກວ່າ : ກອງປະຊຸມ) ໄດ້ໄຂຂຶ້ນໃນເວລາ 14:00 ຫາ 15:30 ໂມງ ຂອງວັນທີ 30/04/2019 ທີ່ຫ້ອງປະຊຸມຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ ນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງ ທ່ານ ຫຼີວເຫວີຍ ປະທານສະພາບໍລິຫານ ບຊລ, ພ້ອມດ້ວຍສະມາຊິກສະພາບໍລິຫານ ບຊລ, ຊຶ່ງມີຜູ້ເຂົ້າຮ່ວມກອງປະຊຸມທັງໝົດ 41 ທ່ານ, ໃນນີ້ ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງ ຈຳນວນທັງໝົດ 22 ທ່ານ, ຜູ້ມອບສິດຈຳນວນ 06 ທ່ານ, ຊຶ່ງກວມຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ **35,528,900** ຮຸ້ນ, ນັບທັງຮຸ້ນທີ່ຖືກມອບສິດ, ບັນລຸອັດຕາສ່ວນ 89% ຂອງຈຳນວນຮຸ້ນ ບຊລ ທັງໝົດ ແລະຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມລະບຽບການຂອງ ບຊລ ແລະ ກົດໝາຍທີ່ກ່ຽວຂ້ອງ, ສຳລັບຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມມີຈຳນວນ 4,475,100 ຮຸ້ນເທົ່າກັບ 11% ຂອງຈຳນວນຮຸ້ນ ບຊລ.

<u>ກອງປະຊຸມໄດ້ພິຈາລະນາ ແລະມີມະຕິດັ່ງນີ້</u> :

- **ວາລະທີ 1:** ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຜ່ານມາ.

- **ວາລະທີ 2:** ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນຂອງ ບໍລິສັດ ຊີມັງລາວ ມະຫາຊົນ ປະຈຳປີ 2017.
- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

  - ເຫັນດີຈຳນວນ 35,528,900 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

- **ວາລະທີ 3:** ພິຈາລະນາແລະຮັບຮອງບົດລາຍງານວຽກງານການດຳເນີນທຸລະກິດ ຂອງບໍລິສັດຊີມັງລາວ ມະຫາຊົນ ປະຈຳປີ 2018
- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

  - ເຫັນດີຈຳນວນ 35,528,900 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

- **ວາລະທີ 4** : ພິຈາລະນາ ແລະ ຮັບຮອງບົດລາຍງານການເງິນ ຂອງບໍລິສັດຊີມັງລາວມະຫາຊົນປະຈຳປີ 2018
- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

  - ເຫັນດີຈຳນວນ 35,528,900 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

- **ວາລະທີ 5** : ພິຈາລະນາ ແລະ ຮັບຮອງທິດທາງການປັນຜົນໃຫ້ແກ່ຜູ້ຖືຮຸ້ນ ປະຈຳປີ 2018

- ເຫັນດີປະຕິບັດແຜນປັນຜົນຄັ້ງນີ້ (6+24)=30ກີບ/ແບ່ງຮຸ້ນ,ຄື 30 ກີບ/ຮຸ້ນx40,004,000ຮຸ້ນ= 1,200,120,000ກີບ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້ :

ອັດຕາສ່ວນຮຸ້ນພິເສດ ແລະຜູ່ຖືຮຸ້ນ	ແບ່ງສ່ວນຈຳນວນເງິນ (ກີບ)	ແບ່ງສ່ວນຈຳນວນເງິນ (ໂດລາ)
CYC 35.6964%	428,399,636	50,175.64
DAI 34.2966%	411,600,356	48,208.05
ท่านว0.007%	84,008	9.84
ມິນຊິນທົ່ວໄປ 30%	360,036,000	42,168.66
ລວມ	1,200,120,000	140,562.19

- ທິດທາງການປັນຜົນຂ້າງເທິງແມ່ນກຳນົດເອົາວັນທີ 20 ພຶດສະພາ 2019 ເປັນມື້ລົງທະບຽນແລະ ຈະໂອນເຂົ້າບັນຊີໃນວັນທີ 30 ພຶດສະພາ 2019

- ມະຕິ : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

  - ເຫັນດີຈຳນວນ 35,528,900 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

•**ວາລະທີ 06** :ພິຈາລະນາ ແລະ ຮັບຮອງບົດລາຍງານແຜນດຳເນີນທຸລະກິດຂອງ ບໍລິສັດ ຊີມັງລາວ ມະຫາຊົນປະຈຳປີ 2019

1. ປະລິມານການຜະລິດ:ແຜນຜະລິດກະລິງເກີ 190,000ໂຕນ,ການຈຳໜ່າຍຊີມັງ 200,000 ໂຕນ;
2. ລາຍຮັບທຸລະກິດ:ມຸ້ງໝັ້ນໃຫ້ສຳເລັດ 100.000.000.000ກີບ ເທົ່າກັບ 11,700,000ໂດ ລາສະຫະລັດ.
3. ຍອດຜົນກຳໄລທັງໝົດ:ຄາດຄະເນສຳເລັດຍອດຜົນກຳໄລແມ່ນ 3,418,800,000 ກີບ ເທົ່າ ກັບ 400.000ໂດລາສະຫະລັດ.
4. ຊັບສິນສຸດທິ:ຄາດວ່າເພີ້ມຂຶ້ນ 5%;
5. ສຳເລັດໂຄງການແກ້ໄຂເຕົາມິກ 2ຄັ້ງ:ໂຄງການແກ້ໄຂກະລິງເກີເຂົ້າຖັງເພື່ອຍົກສູງຄຸນນະພາບ, ໂຄງການເພີ້ມຖັງຊີມັງເຫລັກເພື່ອແກ້ໄຂຄຸນນະພາບໃຫ້ສູງຂຶ້ນ.

- ມະຕິ : ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

  - ເຫັນດີຈຳນວນ 35,528,900 ສຽງ ເທົ່າກັບ 100%
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0%

- **ວາລະທີ 07** : ພິຈາລະນາ ແລະ ຮັບຮອງການລາຈາກຕຳແໜ່ງຂອງບັນດາຄະນະກຳມະການຄັດເລືອກ, ຄະນະກຳມະການບໍລິຫານຄວາມສ່ຽງ ແລະ ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ ຂອງທ່ານ ມາຊານ, ທ່ານ ຈັນທະວີໄລ ໄຊຍະລາດ ແລະທ່ານ ເສີນເຫວີຍ.

- ມະຕິ : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

  - ເຫັນດີຈຳນວນ 35,528,900 ສຽງ ເທົ່າກັບ 100%
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0%

- **ວາລະທີ 08**: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຄະນະກຳມະການຄັດເລືອກ,ຄະນະກຳມະ ການບໍລິຫານຄວາມສ່ຽງ ແລະ ຄະນະກຳມະການກວດສອບລາຍການທີ່ກ່ຽວພັນຜູ້ໃໝ່ແທນ ຜູ້ເກົ່າທີ່ລາອອກໄປ.

- **ກຳມະການຊຸດໃໝ່ :**

1. ເຫັນດີ ທ່ານ ເຈ້ຍ ຢ້າວຊີ ຮັບໜ້າທີ່ຄະນະກຳມະການຄັດເລືອກ ຂອງບໍລິສັດຊີມັງລາວ ມະຫາຊົນຄົນໃໝ່.
2. ເຫັນດີ ທ່ານ ຄຳຜາງ ສຸກແສງດາວ ຮັບໜ້າທີ່ຄະນະກຳມະການຄັດເລືອກ ແລະ ຄະນະ ກຳມະການກວດສອບລາຍງານທີ່ກ່ຽວພັນຄົນໃໝ່.
3. ເຫັນດີ ທ່ານ ຈ່າງຢິງຟຸ ຮັບໜ້າທີ່ ຄະນະກຳມະການ ບໍລິຫານຄວາມສ່ຽງຄົນໃໝ່.

- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າ ຮ່ວມກອງປະຊຸມຄື :

- ເຫັນດີຈຳນວນ	35,528,900 ສຽງ ເທົ່າກັບ	100 %
- ບໍ່ເຫັນດີຈຳນວນ	0 ສຽງ ເທົ່າກັບ	0 %

- **ວາລະທີ 09:** ພິຈາລະນາ ແລະຮັບຮອງການວ່າຈ້າງບໍລິສັດ ກວດສອບບັນຊີ (EY)

ອີງຕາມການປະເມີນ ແລະກວດກາກອງປະຊຸມສະມາຊິກສະພາບໍລິຫານຄັ້ງທີ 1 ປະຈຳປີ 2017 ຂອງບໍລິສັດ ເຫັນດີສືບຕໍ່ວ່າຈ້າງບໍລິສັດກວດສອບ EY ຕາມສັນຍາທີ່ໄດ້ເຊັນກັນໃນປີ 2017 ຊຶ່ງ ຄ່າບໍລິການປີລະ 31,600 ໂດລາ ໃນໄລຍະ 3 ປີ ແຕ່ປີ 2018-2020 ແມ່ນ 94,800 ໂດລາ ສະຫະລັດ (ລວມອາກອນ) ໄດ້ມີການລາຍງານໃນກອງປະຊຸມສະພາບໍລິຫານຄັ້ງອັນທີ 10/4/ 2019.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານ ເພື່ອຊາບ ໃຊ້ຕາງລາຍງານ
ດ້ວຍຄວາມເຄົາລົບ ແລະນັບຖືເປັນຢ່າງສູງ,

ປະທານກອງປະຊຸມ

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ຫົວໜ້າ